ASIAN AMERICANS ADVANCING JUSTICE AAJC

**ການຟ້ອງຮ້ອງ 2020 *Census* ແລະ ຄວາມໝາຍຂອງມັນສໍາລັບ ບັນດາຊຸມຊົນ ອາຊີ ອາເມຣິກັນ**

ພາຍຫຼັງສານສູງແຫ່ງສະຫະລັດໄດ້ກີດກັ້ນ ຝ່າຍບໍລິຫານ ໃນການເພີ່ມ ຄໍາຖາມກ່ຽວກັບການຖືສັນຊາດໄປຍັງ ການສໍາຫລວດພົນລະເມືອງ ຫຼື 2020 Census, ຝ່າຍບໍລິຫານໄດ້ຊອກຫາວິທີອື່ນໃນການເຮັດໃຫ້ 2020 Census ອ່ອນແອລົງ ແລະ ຂັດຂວາງ ບັນດາຊຸມຊົນທີ່ຖືກນັບຕໍ່າກວ່າຕົວຈິງໃນອະດີດ ໃນການ ການຖືກນັບຢ່າງຄົບຖ້ວນ ແລະ ຢ່າງຖືກຕ້ອງ ແລະ ການຖືກເປັນຕົວແທນໃນຂະບວນການທາງການເມືອງຂອງພວກເຮົາ. ສຶກສາເພີ່ມຕື່ມກ່ຽວກັບ 2020 Census ແລະ ຍ້ອນຫຍັງມັນຈຶ່ງສໍາຄັນສໍາລັບ ຊຸມຊົນຂອງພວກເຮົາທີ່ www.CountUsIn2020.org.

**ຂໍ້ສໍາຄັນ:**

1. ອີງຕາມລັດຖະທໍາມະນູນ, ການສໍາຫລວດພົນລະເມືອງແມ່ນໝາຍວ່າ ການນັບທຸກໆຄົນ. ທຸກໆຄົນໃນຊຸມຊົນຂອງພວກເຮົາຄວນຈະຖືກນັບ, ໂດຍບໍ່ຄໍານຶງເຖິງ ສະຖານະ ການເຂົ້າເມືອງ.
2. ການສໍາຫລວດພົນລະເມືອງກະທົບ ການສະໜອງທຶນລັດຖະບານກາງ ແລະ ຊັບພະຍາກອນ ທີ່ ຊຸມຊົນຂອງພວກເຮົາໄດ້ຮັບ ແລະ ການເປັນຕົວແທນທາງດ້ານການເມືອງຂອງພວກເຮົາ ແລະ ສິດສຽງ ສໍາລັບ ສິບປີທາງໜ້າ. ພວກເຮົາຕ້ອງການການນັບທີ່ຄົບຖ້ວນ ແລະ ແມ່ນຍໍາ ເພື່ອຮັບການແບ່ງປັນຊັບພະຍາກອນທີ່ຍຸຕິທໍາຂອງພວກເຮົາ.
3. ປັດຈຸບັນນີ້ການນັບ 2020 Census ແມ່ນສິ້ນສຸດລົງແລ້ວ, Census Bureau ຕ້ອງມີເວລາທີ່ພຽງພໍໃນການປະມວນຜົນຂໍ້ມູນທີ່ເກັບກໍາມາ ແລະ ລະບຸຂໍ້ຜິດພາດໃດໜຶ່ງ. ການເລັ່ງການປະມວນຜົນຂໍ້ມູນເພື່ອລາຍງານຕົວເລກສຸດທ້າຍພາຍໃນ ວັນທີ 31 ທັນວາ ອາດຈະສົ່ງຜົນໃຫ້ມີການນັບທີ່ບໍ່ຖືກຕ້ອງສໍາລັບ ບັນດາຊຸມຊົນທີ່ຖືກນັບຕໍ່າກວ່າຕົວຈິງໃນອະດີດຜ່ານມາ.

**ແມ່ນຫຍັງຄືຄວາມສ່ຽງໃນການຟ້ອງຮ້ອງທີ່ດໍາເນີນຢູ່ ຕໍ່ ການສໍາຫລວດພົນລະເມືອງ ຫຼື 2020 *Census?***

- ການຟ້ອງຮ້ອງຄະດີກໍາລັງຈະຖືກສົ່ງໄປທີ່ສານໃນການຕໍ່ສູ້ທີ່ຕໍ່ເນື່ອງສໍາລັບ ການສໍາຫລວດພົນລະເມືອງທີ່ສົມບູນ ແລະ ຖືກຕ້ອງ. ສາມບັນຫາຕົ້ນຕໍທີ່ກໍາລັງຖືກຟ້ອງຮ້ອງແມ່ນ: (1) ການຕັດເວລາການນັບ ແລະ ການປະມວນຜົນຂໍ້ມູນໃຫ້ສັ້ນລົງ; (2) ບັນທຶກຂໍ້ຄວາມຂອງປະທານາທິບໍດີໃນການຍົກເວັ້ນຊາວອົບພະຍົບທີ່ບໍ່ມີເອກະສານຈາກ ການຈັດສັນສະພາຄອນເກຣສ ແລະ (3) ການສ້າງໄຟລ໌ຂໍ້ມູນ (ຮຽກວ່າ ປະຊາກອນທີ່ມີອາຍຸເຂົ້າເກນໃນການລົງຄະແນນ (Citizen Voting Age Population) ຫຼື ໄຟລ໌ "CVAP") ເພື່ອບໍ່ລວມເອົາ ພົນລະເມືອງທີ່ບໍ່ຖືສັນຊາດອາເມລິກາຈາກ

ຂະບວນການກຳນົດເຂດການເລືອກຕັ້ງໃໝ່ໃນລັດ (state-redistricting process). ອົງກອນບໍ່ຫວັງຜົນກຳໄລ Asian Americans Advancing Justice | AAJC ("Advancing Justice-AAJC"), ຄຽງຄູ່ກັບ MALDEF (ກອງທຶນການສຶກສາ ແລະ ຕໍ່ສູ້ຄະດີທາງກົດໝາຍສຳລັບຊາວ ອາຟຣິກາ ອາເມຣິກາ ຫຼື Mexican American Legal Defense and Educational Fund), ປັດຈຸບັນກຳລັງທ້າທາຍຄວາມພະຍາຍາມເຫລົ່ານີ້ໃນການເຮັດໃຫ້ ການສຳຫລວດພົນລະເມືອງມີຄວາມອ່ອນແອລົງໃນ ສານ (federal court).

- ***ການຕັດທາມໄລນ໌ໃຫ້ສັ້ນລົງ.*** ໃນເວລາທີ່ Census Bureau ຖືກບັງຄັບໃນການປ່ຽນ ແຜນການດຳເນີນງານຂອງພວກເຂົາເນື່ອງຈາກ ການລະບາດ COVID-19, Census Bureau ຕັດສິນວ່າ ມັນມີຄວາມຈຳເປັນໃນການສືບຕໍ່ນັບ ຈົນເຖິງ ວັນທີ 31 ຕຸລາ 2020, ເພື່ອຮັບປະກັນ ການນັບທີ່ສົມບູນ ແລະ ຖືກຕ້ອງ ແລະ ສືບຕໍ່ໃນການປະມວນຜົນ ຂໍ້ມູນຈົນເຖິງ ວັນທີ 30 ເມສາ 2021. ແຕ່ວ່າ, ໃນເດືອນສິງຫາ, Census Bureau ໄດ້ປະກາດຢ່າງຮີບດ່ວນວ່າມັນຈະຕັດເວລາທີ່ຈຳເປັນອອກເພື່ອດຳເນີນ ການສຳຫລວດພົນລະເມືອງໂດຍການສິ້ນສຸດການນັບໃນວັນທີ 30 ກັນຍາ 2020 ແລະ ປະມວນຜົນຂໍ້ມູນ ແລະ ການລາຍງານຈຳນວນນັບສຸດທ້າຍໃຫ້ ປະທານາທິບໍດີ ພາຍໃນວັນທີ 31 ທັນວາ 2020.

- ***ບັນທຶກຂອງປະທານາທິບໍດີ:*** ທຸກໆຄົນໝາຍເຖິງ ການນັບໃນ ການສຳຫລວດທຸກໆສິບປີ, ໂດຍບໍ່ຄຳນຶງເຖິງ ສະຖານະການເຂົ້າເມືອງ. ເຖິງຢ່າງໃດກໍຕາມ, ໃນວັນທີ 21 ກໍລະກົດ 2020, ປະທານາທິບໍດີ ທຣໍາ ໄດ້ອອກ [ບັນທຶກ (memo)] ເພື່ອບໍ່ລວມເອົາການນັບການສຳຫລວດພົນລະເມືອງ ຫຼື censusສຳລັບຊາວອົບພະຍົບທີ່ບໍ່ມີເອກະສານທີ່ໃຊ້ເພື່ອຈັດສັນໃໝ່ ທີ່ນັ່ງສະພາຄອນເກຣສໃນລັດຕ່າງໆ. ລັດຖະທຳມະນູນກຳນົດວ່າທີ່ນັ່ງສະພາຄອນເກຣສຕ້ອງຖືກຈັດສັນຕາມ "ຈຳນວນຄົນທັງໝົດໃນແຕ່ລະລັດ" ເພື່ອໃຫ້ ບັນດາລັດຖືກເປັນຕົວແທນໃນສັດສ່ວນປະຊາກອນຂອງແຕ່ລະລັດ. ການເອົາຊາວອົບພະຍົບທີ່ບໍ່ມີເອກະສານອອກຈາກ ການນັບເພື່ອການຈັດສັນແມ່ນບໍ່ເຄີຍມີມາກ່ອນ ແລະ ຜິດຕໍ່ກົດໝາຍລັດຖະທຳມະນູນ ແລະ ຈະປ່ຽນຍ້າຍ ການເປັນຕົວແທນທາງດ້ານການເມືອງ ຈາກສະຖານທີ່ທີ່ມີຊຸມຊົນຂອງຊາວອົບພະຍົບຈຳນວນຫລວງຫລາຍ.

- ໄພລ໌ ***CVAP***: ໃນເດືອນກໍລະກົດ 2019, ພຽງສອງສາມມື້ຫລັງຈາກ ສານສູງໄດ້ກີດກັ້ນ ການເພີ່ມຄຳຖາມທາງດ້ານສັນຊາດ, ປະທານາທິບໍດີ ທຣໍາ ໄດ້ອອກ [ຄຳສັ່ງພິເສດຂອງຝ່າຍບໍລິຫານ] ອອກຄຳສັ່ງໃຫ້ Census Bureau

ເພື່ອເກັບກຳຂໍ້ມູນທາງດ້ານພົນລະເມືອງທີ່ຖືສັນຊາດຈາກ ສຳນັກງານລັດ ແລະ ລັດຖະບານກາງເພື່ອທີ່ ລັດຕ່າງໆສາມາດບໍ່ລວມເອົາ ພົນລະເມືອງທີ່ບໍ່ຖືສັນຊາດອາເມຣິກາ ເຂົ້າໃນການນັບປະຊາກອນທີ່ໃຊ້ເພື່ອ ວາດ ເຂດເລືອກຕັ້ງ State legislative districts (SLD). ການໃຊ້ໄຟລ໌ CVAP ກັບຂໍ້ມູນພົນລະເມືອງຖືສັນຊາດເທົ່ານັ້ນໃນລະດັບບລັອກ ຈະເຮັດໃຫ້ ອຳນາດທາງການເມືອງຂອງ ຊາວລາຕິນ ແລະ ອາຊີ ອາເມຣິກັນ ຜູ້ທີ່ອາດອາໄສຢູ່ໃນ ຊຸມຊົນຊາວອົບພະຍົບຫລຸດລົງຢ່າງບໍ່ໄດ້ສັດສ່ວນ.

## ສະພາບປັດຈຸບັນແມ່ນຫຍັງ?[1]

- ການນັບເປັນລາຍຕົວ ສຳລັບ 2020 Census ທີ່ສິ້ນສຸດໃນ ວັນທີ 15 ຕຸລາ 2020. ສານສູງໄດ້ຫລຸດເວລາການນັບໃຫ້ສັ້ນລົງເມື່ອບໍ່ປະຕິບັດຕາມຄຳສັ່ງຈາກ ສານຂັ້ນຕໍ່າກວ່າ ເຊິ່ງຄຳສັ່ງນັ້ນໄດ້ສັ່ງໃຫ້ກົມ Census Bureau ສືບຕໍ່ໃນການນັບຈົນຮອດ ວັນທີ 31 ຕຸລາ, ຕາມທີ່ Census Bureau ໄດ້ມີແຜນການເບື້ອງຕົ້ນ ເນື່ອງຈາກ ການລະບາດຂອງ COVID-19.
- ປັດຈຸບັນການນັບເປັນລາຍຕົວສິ້ນສຸດແລ້ວ, ກົມ Census Bureau ຈຳຕ້ອງປະມວນຜົນຂໍ້ມູນທີ່ເກັບກຳ ແລະ ກະກຽມຕົວເລກສຳລັບບົດລາຍງານ. "ການປະມວນຜົນຫລັງຈາກການເກັບກຳຂໍ້ມູນ" ນີ້ແມ່ນສຳຄັນຍິ່ງໃນການລະບຸຂໍ້ຜິດພາດໃດໜຶ່ງ ແລະ ຮັບປະກັນ ການນັບທີ່ຖືກຕ້ອງ.

- ເວລາກຳນົດປັດຈຸບັນສຳລັບກົມ Census Bureau ໃນການສົ່ງມອບ ການນັບສຸດທ້າຍປະຈຳປີ 2020 ໃຫ້ ປະທານາທິບໍດີແມ່ນ ວັນທີ 31 ທັນວາ 2020. ແນວໃດກໍຕາມ, ຜ່ານມາ ກົມ Census Bureau ໄດ້ກ່າວຢ່າງຊໍ້າແລ້ວຊໍ້າອີກວ່າ ບໍ່ມີເວລາພຽງພໍໃນການປະຕິບັດຕາມເວລາກຳນົດນີ້ ແລະ ມັນຕ້ອງການຈົນຮອດວັນທີ 30 ເມສາ 2021 ເພື່ອເຮັດໃຫ້ແນ່ໃຈວ່າ ມັນສາມາດດຳເນີນຂັ້ນຕອນການປະມວນຜົນຂໍ້ມູນທີ່ຈຳເປັນທັງໝົດ.

- ຫລາຍໆການຟ້ອງຮ້ອງຄະດີໄດ້ຮຽກຮ້ອງວ່າ ເວລາກຳນົດ ວັນທີ 31 ທັນວາ ຈຳຕ້ອງປະວາງໄວ້ກ່ອນ. ຜູ້ພິພາກສາລັດຖະບານກາງໃນ California ເຫັນດີ ແລະ ອອກຖະແຫລງການຄືນໃໝ່ວ່າ ວັນທີ 30 ເມສາ 2021 ແມ່ນເວລາກຳນົດສຳລັບການລາຍງານ. ລັດຖະບານໄດ້ອຸທອນວ່າ ການຕັດສິນ ແລະ ການອອກກົດລະບຽບໄດ້ຖືກໃຫ້ລໍໄວ້ກ່ອນ ຂະນະທີ່ ການຕັດສິນຢູ່ໃນຂັ້ນອຸທອນ. ນີ້ໝາຍວ່າ, ນັບແຕ່ດຽວນີ້ເປັນຕົ້ນໄປ, Census Bureau ມີໜ້າທີ່ໃນການລາຍງານ ຈຳນວນນັບການຈັດສັນພາຍໃນວັນທີ 31 ທັນວາ 2020 ແລະ ດຳເນີນການ ການປະມວນຜົນຫລັງການເກັບກຳຂໍ້ມູນ ໃນເວລາທີ່ໜ້ອຍກວ່າເຄິ່ງໜຶ່ງຕາມທີ່ພວກເຂົາໄດ້ມີແຜນ.

---

[1] ປັບປຸງສຸດທ້າຍ ວັນທີ 26 ຕຸລາ 2020. ຂະນະທີ່ ການຟ້ອງຮ້ອງດຳເນີນຕໍ່ໄປ ຈະມີການປ່ຽນແປງໃນສະພາບການໃນທ້ອງຖິ່ນ.

- ຕາມບັນທຶກຂອງປະທານາທິບໍດີ, ໃນວັນທີ 10 ກັນຍາ 2020, ຄະນະກຳມະການທີ່ປະກອບດ້ວຍຜູ້ພິພາກສາສາມທ່ານໃນ New York ອອກຄຳສັ່ງວ່າ ການບໍ່ລວມເອົາ ຊາວອົບພະຍົບທີ່ບໍ່ມີເອກະສານໃນການນັບການຈັດສັນທີ່ນັ່ງສະພາຄອນເກຣສນັ້ນແມ່ນຜິດກົດໝາຍ. ລັດຖະບານທ່ານທຣຳ ໄດ້ຢື່ນອຸທອນການນອອກຄຳສັ່ງນັ້ນ ແລະ ສານສູງໄດ້ກຳນົດເວລາຮັບຟັງການພິຈາລະນາຄະດີໃນ ວັນທີ 30 ພະຈິກນີ້.

## ນີ້ແມ່ນໝາຍຄວາມວ່າແນວໃດສຳລັບ ຊຸມຊົນ ຄົນ ອາຊີ ອາເມຣິກັນ, ຊາວຮາວາຍດັ້ງເດີມ ແລະ ຊາວເກາະປາຊີຟິກ?

- ປັດຈຸບັນ, ປະມານ ໜຶ່ງໃນຫ້າຂອງຄົນອາຊີ ອາເມຣິກັນ ແລະ ໜຶ່ງໃນສາມຂອງຄົນຮາວາຍດັ້ງເດີມ ແລະ ຊາວເກາະປາຊີຟິກ ຢູ່ອາໄສໃນ ບ່ອນທີ່ຍາກໃນການນັບພົນລະເມືອງ ແລະ ຖືກນັບຕ່ຳກວ່າຈຳນວນຕົວຈິງໃນການສຳຫລວດພົນລະເມືອງໃນອະດີດຜ່ານມາ. ການນັບທີ່ຖືກຕ້ອງແລະສົມບູນແມ່ນຈຳເປັນສຳລັບທຸກສິ່ງທຸກຢ່າງ ເຊັ່ນວ່າ ຈາກ ການດູແລສຸຂະພາບ ແລະ ການສຶກສາ ຈົນເຖິງ ທີ່ພັກອາໄສ ແລະ ການຄົມມະນາຄົມໃນສິບປີຕໍ່ໜ້າ.

- ເຖິງແມ່ນວ່າ ການນັບຂອງການສຳຫລວດພົນລະເມືອງໄດ້ປິດລົງແລ້ວ, ແຕ່ຄວາມພະຍາຍາມຂອງພວກເຮົາເພື່ອຮັບປະກັນວ່າ ບັນດາຊຸມຊົນຂອງພວກເຮົາຖືກເປັນຕົວແທນຢ່າງຄົບຖ້ວນໃນ ການສຳຫລວດພົນລະເມືອງ ແລະ ເພື່ອຮັກສາ ການສະໜອງທຶນ ແລະ ອຳນາດທາງການເມືອງທີ່ຕໍ່ເນື່ອງ ແລະ ຈະບໍ່ສິ້ນສຸດ. ການເລັ່ງການປະມວນຜົນຂໍ້ມູນເພື່ອລາຍງານຕົວເລກສຸດທ້າຍພາຍໃນ ວັນທີ 31 ທັນວາ ອາດຈະສົ່ງຜົນໃຫ້ມີການນັບທີ່ບໍ່ຖືກຕ້ອງສຳລັບ ບັນດາຊຸມຊົນທີ່ຖືກນັບຕ່ຳກວ່າຕົວຈິງໃນອະດີດຜ່ານມາ.

- ລັດຖະທຳມະນູນແມ່ນຂ້ອນຂ້າງຊັດເຈນທີ່ວ່າ ການສຳຫລວດພົນລະເມືອງຄວນຈະນັບ “ຈຳນວນຄົນທັງໝົດໃນແຕ່ລະລັດ.” ການບໍ່ລວມເອົາສະມາຊິກຊຸມຊົນຂອງພວກເຮົາທີ່ບໍ່ມີເອກະສານໃນການຈັດສັນທີ່ນັ່ງສະພາຄອນເກຣສຈະກະທົບຢ່າງບໍ່ໄດ້ສັດສ່ວນຕໍ່ ການເປັນຕົວແທນທາງດ້ານການເມືອງຂອງຊຸມຊົນຊາວອົບພະຍົບ ແລະ ຫລາຍໆຊຸມຊົນແຫ່ງຄົນສີຜິວ.

- ອົງກອນບໍ່ຫວັງຜົນກຳໄລ Advancing Justice-AAJC, ຮ່ວມມືກັບ MALDEF, ສືບຕໍ່ໃນການຕໍ່ສູ້ກັບບັນຫາເຫຼົ່ານີ້ໃນສານຍຸຕິທຳເພື່ອຮັບປະກັນວ່າ ບັນດາຊຸມຊົນຂອງພວກເຮົາແມ່ນຖືກເປັນຕົວແທນ.